ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 2010010 /ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 17 ຕຸລາ 2020

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ

ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2020, ທີ່ຈະຈັດຂຶ້ນໃນວັນທີ 16 ຕຸລາ 2020

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 4/2020 ທີ່ຈັດຂຶ້ນໃນວັນທີ 16 ຕຸລາ 2020 ເຊິ່ງມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງນີ້:

1. ພິຈາລະນາອະນຸມັດ ແກ້ໄຂກົດລະບຽບຂອງບໍລິສັດ ເພື່ອປ່ຽນແປງສັດສ່ວນຈຳນວນຮຸ້ນຂອງຜູ້ສ້າງຕັ້ງ
2. ພິຈາລະນາອະນຸມັດ ແກ້ໄຂກົດລະບຽບຂອງບໍລິສັດ ເພື່ອປ່ຽນແປງມູນຄ່າກຳນົດ ແລະ ເພີ່ມຈຳນວນຮຸ້ນ ໃຫ້ເທົ່າກັບທຶນຈົດທະບຽນເດີມ (Split par value)
3. ກຳນົດເອົາວັນທີ 3 ພະຈິກ 2020 ເປັນມື້ປິດປຶ້ມທະບຽນຜູ້ຖືຄອງຮຸ້ນເພື່ອກຳນົດສິດໃນການເຂົ້າຮ່ວມກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020
4. ກຳນົດໃຫ້ວັນທີ 4 ທັນວາ 2020 ເວລາ 10:00 ໂມງ ເປັນມື້ ແລະ ເວລາ ຈັດກອງປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020 ແລະ ອະນຸມັດໜັງສືເຊີນປະຊຸມ, ວາລະການປະຊຸມ ແລະ ມອບໝາຍໃຫ້ຜູ້ອຳນວຍການໃຫຍ່ ເປັນຜູ້ກະກຽມກອງປະຊຸມ ກຳນົດສະຖານທີ່ ແລະ ອື່ນໆ ຂອງການປະຊຸມວິສາມັນ ຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫຍ່

(ທ່ານ ນາມ ຕຣີລິດວິໄລ)